# ການເຂົ້າຮ່ວມຂະບວນການແຂ່ງຂັນກິລາເພື່ອຂໍ່ານັບຮັບຕ້ອນ ວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 48 ປີ ( 07/10/1968 - 07/10/2016 )



ເນື່ອງໃນວັນສ້າງຕັ້ງທະນາຄານແຫ່ງ ສປປລາວ ຄົບຮອບ 48 ປີ ( 1968 – 2016 ) ເພື່ອເປັນການສ້າງຂະບວນການ ແລະ ໃຫ້ເຫັນໄດ້ເຖິງຄວາມໝາຍຄວາມສໍາຄັນຂອງວັນດັ່ງກ່າວ, ທະນາຄານແຫ່ງ ສປປ ລາວ ຈຶ່ງໄດ້ຈັດພິທີ **ການແຂ່ງຂັນກິລາ ເພື່ອຂໍ່ານັບຮັບຕ້ອນວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ປະຈໍາປີ 2016** ຂຶ້ນ, ການແຂ່ງຂັນກິລາໃນຄັ້ງນີ້ມີ 2 ປະເພດກິລາຄື: ກິລາບານເຕະຊາຍ ແລະ ກິລາມວນຊົນ ( ແລ່ນໄຖ່ຍິງ-ຊາຍ, ແລ່ນມັດຂາ ຍິງ-ຊາຍ ແລະ ດຶງເຊືອກປະສົມ ຍິງ-ຊາຍ ) ໃນນັ້ນ ໄດ້ມີການເຂົ້າຮ່ວມຈາກ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານອື່ນທົ່ວລະບົບທະນາຄານ. ຫຼັງຈາກການແຂ່ງຂັນກິລາໃນຮອບຄັດເລືອກຂອງກິລາທັງ 2 ປະເພດ, ໃນວັນທີ **06/10/2016** ເວລາ 13:00 ໂມງ ທີ່ເດີ່ນກິລາ ເຈົ້າອານຸວົງໄດ້ເປັນມື້ຕັດສິນການແຂ່ງຂັນຮອບສຸດທ້າຍ ແລະ ເປັນການປິດພິທີການແຂ່ງຂັນ ໂດຍມີທ່ານ ຮອງຜູ້ວ່າທະນາຄານແຫ່ງ ສປປ ລາວ 3 ທ່ານເຂົ້າຮ່ວມ: **ທ່ານ ສອນໄຊ ສິດພະໄຊ ເປັນປະທານ**, ທ່ານ ຄໍາວົງ ທິບພະວົງ ແລະ ທ່ານ ນາງ ວັດທະນາ ດາລາລອຍ ພ້ອມດ້ວຍບັນດານັກກິລາ ແລະ ພະນັກງານທະນາຄານທົ່ວລະບົບເຂົ້າຮ່ວມພິທີດັ່ງກ່າວຢ່າງເປັນຂະບວນຟົດຟື້ນ.



ຫຼັງຈາກສິ້ນສຸດການແຂ່ງຂັນທຸກປະເພດກິລາ ໄດ້ມີການເດີນຂະບວນກ້ອນກໍາລັງຈາກບັນດາທະນາຄານທົ່ວລະບົບ ກ່ອນຈະປິດພິທີ, ທ່ານ ສອນໄຊ ສິດພະໄຊ ໂອ້ລົມບັນດາພະນັກງານທະນາຄານ ແລະ ກ່າວຄໍາຊົມເຊີຍຕໍ່ກັບການເຕົ້າໂຮມ ສ້າງຂະບວນການ ຕ່າງໆທີ່ສະແດງເຖິງຄວາມຕື່ນຕົວຕໍ່ກັບອົງການຈັດຕັ້ງ, ປຸກລະດົມພະນັກງານທະນາຄານທຸກພາກສ່ວນໃຫ້ສູ້ຊົນ, ຕັ້ງໜ້າເຮັດວຽກວິຊາສະເພາະ, ຮັດແໜ້ນຄວາມສາມັກຄີເປັນຫຼັກ ແລະ ໄດ້ກ່າວປິດພິທີຢ່າງເປັນທາງການ ເວລາ 17:20 ໂມງ.

# ສະຫຼຸບຜົນການແຂ່ງຂັນ:

## 1. ກິລາບານເຕະຊາຍ:



- **ອັນດັບ 1:** ທະນາຄານ ນະໂຍບາຍ
- **ອັນດັບ 2:** ທະນາຄານ ແຫ່ງ ສປປ ລາວ
- **ອັນດັບ 3 ຮ່ວມ**: ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ ຮ່ວມກັບ ທະນາຄານ ສົ່ງເສີມກະສິກຳ

## 2. ກິລາມວນຊົນ



- **ແລ່ນໄຖ່ຍິງ:**
  - **ອັນດັບ 1:** ທະນາຄານແຫ່ງ ສປປ ລາວ
  - **ອັນດັບ 2:** ທະນາຄານ ພັດທະນາລາວ
  - **ອັນດັບ 3 ຮ່ວມ:** ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ຮ່ວມກັບ ສະຖາບັນການທະນາຄານ

- **ແລ່ນໄຖ່ຊາຍ:**
    - **ອັນດັບ 1:** ທະນາຄານ ເອຊີລີດາ
    - **ອັນດັບ 2:** ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
    - **ອັນດັບ 3 ຮ່ວມ:** ທະນາຄານແຫ່ງ ສປປ ລາວ ຮ່ວມກັບ ທະນາຄານ ພັດທະນາລາວ



- **ແລ່ນມັດຂາຍິງ:**
    - **ອັນດັບ 1:** ທະນາຄານ ຊາຄອມແບ້ງ
    - **ອັນດັບ 2:** ທະນາຄານ ຮ່ວມພັດທະນາ
    - **ອັນດັບ 3 ຮ່ວມ:** ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ຮ່ວມກັບ ທະນາຄານແຄນນາເດຍ ລາວຈຳກັດ
- **ແລ່ນມັດຂາຊາຍ:**
    - **ອັນດັບ 1:** ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ
    - **ອັນດັບ 2:** ທະນາຄານ ພັດທະນາລາວ
    - **ອັນດັບ 3 ຮ່ວມ:** ທະນາຄານ ເອຊີລີດາ ຮ່ວມກັບ ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ




- **ດຶງເຊືອກປະສົມ ຍິງ-ຊາຍ:**
    - **ອັນດັບ 1:** ທະນາຄານ ສົ່ງເສີມກະສິກຳ
    - **ອັນດັບ 2:** ທະນາຄານ ນະໂຍບາຍ
    - **ອັນດັບ 3 :** ທະນາຄານແຫ່ງ ສປປ ລາວ











ພາບ ແລະ ຂຽນຂ່າວໂດຍ: ທ້າວ ສຸລິຍົງ ສຸກຈັນດີ